ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 0487 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 27 ເມສາ 2023

# ແຈ້ງການ

ຮຽນ: - ທ່ານຫົວໜ້າຫ້ອງການ, ບັນດາກົມ ແລະ ທຽບເທົ່າກົມ, ສະຖາບັນ, ວິທະຍາໄລການເງິນພາກເໜືອ ແລະ ພາກໃຕ້;
- ທ່ານຫົວໜ້າພະແນກການເງິນ, ພາສີ, ສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງວຽງຈັນ;
- ທ່ານຫົວໜ້າຫ້ອງການການເງິນເມືອງ, ສ່ວຍສາອາກອນ ແລະ ຄັງເງິນປະຈຳເມືອງ, ນະຄອນ, ໜ່ວຍງານສ່ວຍສາອາກອນ ແລະ ໜ່ວຍງານຄັງເງິນປະຈຳເມືອງ ໃນຂອບເຂດທົ່ວປະເທດ.

ເລື່ອງ: ສະໝັກສອບເສັງຄັດເລືອກບັນຈຸລັດຖະກອນໃໝ່ຂອງກະຊວງການເງິນ ປີ 2023.

- ອີງຕາມ ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ສະບັບເລກທີ 74/ສພຊ, ລົງວັນທີ 18 ທັນວາ 2015;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 6041/ກງ, ລົງວັນທີ 6 ທັນວາ 2021;
- ອີງຕາມ ຂໍ້ຕົກລົງຂອງນາຍົກລັດຖະມົນຕີວ່າດ້ວຍການແບ່ງໂກຕ້າລັດຖະກອນໃໝ່ ປີ 2023 ສະບັບເລກທີ 18/ນຍ, ລົງວັນທີ 17 ມັງກອນ 2023 ແລະ ຄຳແນະນຳຂອງລັດຖະມົນຕີກະຊວງພາຍໃນ ສະບັບເລກທີ 08/ພນ, ລົງວັນທີ 07 ກຸມພາ 2023;
- ອີງຕາມ ການເຫັນດີຂອງຄະນະນຳກະຊວງການເງິນ ຄັ້ງວັນທີ 20 ແລະ 21 ເມສາ 2023.

ກົມຈັດຕັ້ງ ແລະ ພະນັກງານ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ: ໃນປີ 2023 ກະຊວງການເງິນໄດ້ຮັບໂກຕ້າລັດຖະກອນໃໝ່ **ຈຳນວນ 11 ຄົນ** ຕາມຂໍ້ຕົກລົງຂອງນາຍົກລັດຖະມົນຕີວ່າດ້ວຍການແບ່ງໂກຕ້າລັດຖະກອນໃໝ່ ປີ 2023 ສະບັບເລກທີ 18/ນຍ, ລົງວັນທີ 17 ມັງກອນ 2023 ແລະ ອີງຕາມຄຳແນະນຳຂອງລັດຖະມົນຕີກະຊວງພາຍໃນ ສະບັບເລກທີ 08/ພນ, ລົງວັນທີ 07 ກຸມພາ 2023 ໄດ້ກຳນົດ ສຳລັບໂກຕ້າລັດຖະກອນໃໝ່ ປີ 2023 ແມ່ນໃຫ້ບູລິມະສິດແກ່ໄຂ **ພະນັກງານຕາມສັນຍາ ຫຼື ອາສາສະໝັກ ຜູ້ທີ່ເຮັດວຽກ 5 ປີ ຂຶ້ນໄປ** (ປີ 2018 ຄືນຫຼັງ) ທີ່ໄດ້ຜ່ານການເຮັດວຽກມາຫຼາຍປີ, ມີປະສົບການ, ມີຜົນງານພົ້ນເດັ່ນ ແລະ ມີຄວາມຮູ້ ຄວາມສາມາດ ສອດຄ່ອງຕາມຕຳແໜ່ງງານ ບົນພື້ນຖານການສອບເສັງຄັດເລືອກ ຕາມລະບຽບການຢ່າງເຂັ້ມງວດ.



สแกนด้วย CamScanner

ສະນັ້ນ, ເພື່ອປະຕິບັດຕາມລະບຽບການໄດ້ກຳນົດ, ກົມຈັດຕັ້ງ ແລະ ພະນັກງານ ຈຶ່ງອອກແຈ້ງການ ດັ່ງນີ້:

1. ເງື່ອນໄຂຂອງຜູ້ທີ່ມີສິດເຂົ້າຮ່ວມສອບເສັງຄັດເລືອກບັນຈຸເຂົ້າເປັນລັດຖະກອນໃໝ່ຂອງກະຊວງການເງິນ ປີ 2023
   - ມີອາຍຸ 18 ປີຂຶ້ນໄປ ແຕ່ບໍ່ເກີນ 35 ປີ;
   - ບໍ່ເຄີຍຖືກສານປະຊາຊົນຕັດສິນລົງໂທດ ຕັດອິດສະລະພາບ ຍ້ອນການກະທຳຜິດໂດຍເຈດຕະນາ, ບໍ່ເຄີຍຖືກວິໄນໄລ່ອອກຈາກອົງການຈັດຕັ້ງພັກ, ລັດ, ລັດວິສາຫະກິດ ຫຼື ອົງການຈັດຕັ້ງສາກົນ;
   - ເປັນພະນັກງານຕາມສັນຍາ ຫຼື ອາສາສະໝັກຂອງຂະແໜງການເງິນ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ມີຂໍ້ຕົກລົງ ຫຼື ສັນຍາແຮງງານ 5 ປີຂຶ້ນໄປ (ນັບແຕ່ ປີ 2018 ຄືນຫຼັງ); ເດັດຂາດ ບໍ່ໃຫ້ການຈັດຕັ້ງທີ່ກ່ຽວຂ້ອງສວຍໂອກາດສ້າງເອກະສານຂຶ້ນມາໃໝ່ ໂດຍບໍ່ຖືກຕ້ອງ ເຮັດໃຫ້ມີການປຽບທຽບຊັ່ງຊາ ເຊິ່ງກັນ ແລະ ກັນ, ພາໃຫ້ເກີດທາງສຽງບໍ່ສະຫງົບຕໍ່ກະຊວງການເງິນ ໃນການຮັບລັດຖະກອນໃໝ່;
   - ມີລະດັບວິຊາສະເພາະ ຊັ້ນສູງ ຂຶ້ນໄປ ສາຂາວິຊາ ທີ່ກ່ຽວຂ້ອງກັບຄວາມຕ້ອງການຂອງກະຊວງການເງິນ ຄື: ການເງິນ-ການບັນຊີ, ການເງິນ-ການທະນາຄານ, ບໍລິຫານທຸລະກິດ, ເສດຖະສາດ, ວັດແທກ ແລະ ໄອທີ;
   - ເປັນຜູ້ທີ່ມີສຸຂະພາບສົມບູນ ແຂງແຮງດີ.

2. ເອກະສານປະກອບສະໝັກສອບເສັງ
   - ຄຳຮ້ອງສະໝັກເຂົ້າສອບເສັງສາມາດມາຮັບເອົາຢູ່ສະຖານທີ່ລົງທະບຽນ (ສະຖາບັນການເງິນ-ການບັນຊີ) ໂດຍບໍ່ໄດ້ຈ່າຍເງິນ ຫຼື ສາມາດດາວໂຫຼດໄດ້ ທາງເວັບໄຊທ໌ ຂອງກະຊວງການເງິນ, ພາຍຫຼັງປະກອບເອກະສານ ມາຍື່ນຕໍ່ຄະນະຮັບຜິດຊອບຮັບເອກະສານ ຈຶ່ງໄດ້ຈ່າຍເງິນຄ່າລົງທະບຽນ 50,000 ກີບ/ຄົນ.
   - ສຳເນົາໃບປະກາສະນີຍະບັດ ແລະ ໃບຄະແນນ ຢ່າງລະ — 01 ສະບັບ;
     (ໃຫ້ຖືໃບປະກາສະນີຍະບັດ ແລະ ໃບຄະແນນຂອງແທ້ມາພ້ອມ)
   - ຊີວະປະຫວັດຫຍໍ້ທົ່ວໄປ — 01 ສະບັບ;
   - ສຳເນົາປຶ້ມສຳມະໂນຄົວ ແລະ ບັດປະຈຳຕົວ ຢ່າງລະ — 01 ສະບັບ;
   - ຮູບຖ່າຍບໍ່ເກີນ 03 ເດືອນ (ຂະໜາດ 3x4) — 02 ໃບ;
   - ໃບແຈ້ງໂທດ — 01 ສະບັບ;
   - ຂໍ້ຕົກລົງ ຫຼື ສັນຍາແຮງງານ 5 ປີຂຶ້ນໄປ (ນັບແຕ່ ປີ 2018 ຄືນຫຼັງ) — 01 ສະບັບ.

   (ສຳລັບມື້ຮັບຄຳຮ້ອງສະໝັກສອບເສັງແມ່ນຢູ່ ສະຖາບັນການເງິນ-ການບັນຊີ ເລີ່ມແຕ່ວັນທີ 08 ພຶດສະພາ ເຖິງວັນທີ 12 ພຶດສະພາ 2023, ສ່ວນມື້ປິດຮັບຄຳຮ້ອງ ວັນທີ 12 ພຶດສະພາ 2023 ເວລາ 16:00ໂມງ, ກຳນົດ 05 ວັນ ລັດຖະການ).

   - ກ່ອນມື້ສອບເສັງ 01 ມື້ ໃຫ້ໄປເບິ່ງລາຍຊື່ຢູ່ ສະຖາບັນການເງິນ-ການບັນຊີ ເພື່ອຕິດຕາມເບິ່ງຫ້ອງສອບເສັງ.



สแกนด้วย CamScanner

3. ສະຖານທີ່ ແລະ ວັນ,ເວລາສອບເສັງ

- ມື້ສອບເສັງ ວັນທີ 20 ພຶດສະພາ 2023;
- ສະຖານທີ່ສອບເສັງ: ສະຖາບັນການເງິນ-ການບັນຊີ.

4. ການບັນຈຸສັບຊ້ອນລັດຖະກອນໃໝ່

ພາຍຫຼັງສຳເລັດການສອບເສັງຄັດເລືອກແລ້ວ ກະຊວງການເງິນຈຶ່ງຈະຄົ້ນຄວ້າພິຈາລະນາການບັນຈຸສັບຊ້ອນລັດຖະກອນໃໝ່ ປີ 2023 ບົນພື້ນຖານບັນຈຸໃຫ້ບ່ອນທີ່ກຳນົດຕຳແໜ່ງງານສຳເລັດ ແລະ ຍັງມີຄວາມຕ້ອງການພະນັກງານ, ກໍລະນີຜູ້ທີ່ສອບເສັງຖືກບັນຈຸເຂົ້າເປັນລັດຖະກອນໃໝ່ ຫາກບໍ່ໄປປະຈຳການ ຕາມການບັນຈຸສັບຊ້ອນຂອງກະຊວງການເງິນ ຖືວ່າສະຫຼະສິດ ແລະ ຈະໄດ້ຄົ້ນຄວ້າຄັດເລືອກເອົາຜູ້ທີ່ມີຄະແນນຖັດໄປ ປ່ຽນແທນ ຕາມລະບຽບການ.

5. ການຈັດຕັ້ງປະຕິບັດ

ໃຫ້ຫົວໜ້າຫ້ອງການ, ບັນດາກົມ ແລະ ທຽບເທົ່າກົມ, ສະຖາບັນ, ວິທະຍາໄລການເງິນພາກເໜືອ ແລະ ພາກໃຕ້, ພະແນກການເງິນ, ພາສີ, ສ່ວຍສາອາກອນ, ຄັງເງິນປະຈຳແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການການເງິນເມືອງ, ສ່ວຍສາອາກອນ ແລະ ຄັງເງິນປະຈຳເມືອງ, ນະຄອນ, ໜ່ວຍງານສ່ວຍສາອາກອນ ແລະ ໜ່ວຍງານຄັງເງິນປະຈຳເມືອງ ແຈ້ງໃຫ້ພະນັກງານຕາມສັນຍາ ແລະ ອາສາສະໝັກ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຮັບຊາບ ແລະ ແນະນຳ ຜູ້ທີ່ມີມາດຖານເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກຳນົດໃນຂໍ້ທີ 1 ຂອງແຈ້ງການສະບັບນີ້ ໃຫ້ປະກອບເອກະສານ ແລະ ເຂົ້າຮ່ວມການສອບເສັງຄັດເລືອກ ຕາມລະບຽບການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.ນໆ.

ຫົວໜ້າກົມ

ອຸໄທ ອິນທິລາດ

<u>ຕິດຕໍ່ພົວພັນ</u>

- ທ່ານ ພູວັນ ໄຊຍະວົງ 020 55027863
- ທ່ານ ນາງ ສຸດາລັດ ວິທະໄຊ 020 59826156
- ທ່ານ ຄຳຊອບ ພາທຸມມະວົງ 020 23428855
- ທ່ານ ສຸກສົມ ຊະນະພົນ 020 99469055



สแกนด้วย CamScanner